LAOS: Guideline on the implementation/adoption of new basic salary

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກກະລາດ ປະຊາທິປະໄຕ ເອກກະພາບ ວັດທະນາຖາວອນ

--------------------

ກະຊວງການເງິນ

ເລກທີ 0013/ກງ

ວຽງຈັນ, ວັນທີ 04 JAN ...

## ບົດແນະນຳ
## ຈັດຕັ້ງປະຕິບັດການເພີ່ມເງິນເດືອນພື້ນຖານໃໝ່

- ອີງຕາມແຈ້ງການຂອງ ຫ້ອງວ່າການສຳນັກງານ ນາຍົກລັດຖະມົນຕີ ສະບັບເລກທີ 2571/ຫສນຍ.ລຂ., ລົງວັນທີ 27/12/2001.
- ອີງຕາມດຳລັດວ່າດ້ວຍການປະກາດໃຊ້ແຜນງົບປະມານແຫ່ງລັດ ສົກປີ 2001-2002 ສະບັບເລກທີ 215/ນຍ, ລົງວັນທີ 24 ຕຸລາ 2001.
- ອີງຕາມພາລະບົດບາດ,ສິດ ແລະ ໜ້າທີ່ຂອງກະຊວງການເງິນ.

ເພື່ອຈັດຕັ້ງຜັນຂະຫຍາຍ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບ ເລກທີ 2571/ຫສນຍ.ລຂ., ລົງວັນທີ 27/12/2001 ກ່ຽວກັບການເຫັນດີໃຫ້ເພີ່ມເງິນເດືອນພື້ນຖານໃໝ່ ແລະ ຍົກດັດສະນີເງິນເດືອນພື້ນຖານໃໝ່ໃຫ້ ມີຄວາມເປັນເອກກະພາບໃນເຂດທົ່ວປະເທດ,, ກະຊວງການເງິນຈິ່ງອອກບົດແນະນຳຈັດຕັ້ງປະຕິບັດ ດັ່ງນີ້ :

I: ກ່ຽວກັບການຍົກລະດັບເງິນເດືອນພື້ນຖານໃໝ່:

1. ໄດ້ຄິດໄລ່ເງິນເດືອນພື້ນຖານຕໍ່າສຸດ 135.000 ກີບ ແລະ ສູງສຸດ 325.000 ກີບ, ມີລະດັບແຕກຕ່າງກັນລະຫວ່າງຊັ້ນຕໍ່າສຸດ ແລະ ຊັ້ນສູງສຸດ ເທົ່າກັບ 2,4 ເທື່ອ ແລະ ຄິດໄລ່ເພີ່ມດັດສະນີ 1 ເທົ່າກັບ 1.000 ກີບ, ເງິນຄ່າຄອງຊີບທີ່ໄດ້ເພີ່ມໃນໄລຍະຜ່ານມານັ້ນແມ່ນໃຫ້ລົບລ້າງ.

2. ການຍົກລະດັບເງິນເດືອນພື້ນຖານໃນຄັ້ງນີ້ແມ່ນຍັງຮັກສາລະບົບ ຊັ້ນແລະຂັ້ນ ເງິນເດືອນຄືເກົ່າ ຄື: ຮັກສາລະດັບເງິນເດືອນ 5 ຊັ້ນ ແຕ່ລະຊັ້ນມີ 15 ຂັ້ນ ລວມທັງໝົດ 75 ຂັ້ນ ໄວ້ຄືເກົ່າ ຕາມດຳລັດເລກທີ 171/ນຍ, ລົງວັນທີ 11 ພະຈິກ 1993 ,ພ້ອມກັນນັ້ນກໍໄດ້ປັບຈຸດເລີ່ມຂອງແຕ່ລະຊັ້ນ ( ຕາມຕາຕະລາງຄັດຕິດມາພ້ອມ ) .

3. ໄດ້ລົບລ້າງເງິນຄ່າຄອງຊີບຂອງລັດຖະມົນຕີວ່າການ, ລັດຖະມົນຕີຊ່ວຍວ່າການ ແລະ ໄດ້ເພີ່ມເງິນເດືອນພື້ນຖານຂຶ້ນ ດັ່ງນີ້:

- ລັດຖະມົນຕີວ່າການແລະປະທານອົງການທຽບເທົ່າ ທີ່ມີຕຳແໜ່ງບໍລິຫານ ປະເພດ 3 ຕາມດຳລັດ 173/ນຍ ແມ່ນໄດ້ຮັບເງິນເດືອນພື້ນຖານ 450.000 ກີບ/ເດືອນ.
- ລັດຖະມົນຕີຊ່ວຍວ່າການແລະຮອງປະທານອົງການທຽບເທົ່າ ທີ່ມີຕຳແໜ່ງບໍລິຫານ ປະເພດ 4 ຕາມດຳລັດ 173/ນຍ ແມ່ນໄດ້ຮັບເງິນເດືອນພື້ນຖານ 400.000 ກີບ/ເດືອນ.

4. ສ່ວນເງິນອຸດໜູນຕ່າງໆແມ່ນໃຫ້ຮັກສາ ແລະ ຄິດໄລ່ຄືເກົ່າ, ການເລື່ອນຊັ້ນ, ຂັ້ນກໍໃຫ້ເລື່ອນຕາມ ດຳລັດ 171/ນຍ ຄືເກົ່າ ບໍ່ໃຫ້ປ່ຽນແປງ.

II: ກ່ຽວກັບອັດຕາເງິນຄ່າຈ້າງໃຫ້ພະນັກງານສັນຍາຈ້າງຢູ່ໃນຂົງເຂດລັດບໍລິຫານ:

* ອັດຕາຄ່າຈ້າງໃຫ້ພະນັກງານສັນຍາຈ້າງໄດ້ຈຳແນກອອກເປັນ 6 ຊັ້ນ,ແຕ່ລະຊັ້ນກຳນົດເປັນເງິນເດັດຖານຕາມຈຸດເລີ່ມໃຫ້ແຕ່ລະຊັ້ນ ດັ່ງນີ້:

- ບໍ່ຈົບວິຊາສະເພາະຈັດເປັນ ພະນັກງານສັນຍາຈ້າງຊັ້ນ 1 : 138.000 ກີບ/ຄົນ/ເດືອນ.
- ຈົບວິຊາສະເພາະຊັ້ນຕົ້ນຈັດເປັນ ພະນັກງານສັນຍາຈ້າງຊັ້ນ 2 : 145.000 ກີບ/ຄົນ/ເດືອນ.
- ຈົບວິຊາສະເພາະຊັ້ນກາງຈັດເປັນ ພະນັກງານສັນຍາຈ້າງຊັ້ນ 3 : 158.000 ກີບ/ຄົນ/ເດືອນ.
- ຈົບວິຊາສະເພາະຊັ້ນສູງຫຼືປະລິນຍາຕີຈັດເປັນ ພະນັກງານສັນຍາຈ້າງຊັ້ນ 4 :179.000 ກີບ/ຄົນ/ເດືອນ.
- ຜູ້ທີ່ມີເງິນເດືອນໃນ ຊັ້ນ5 ຜ່ານມາຈັດເປັນ ພະນັກງານສັນຍາຈ້າງຊັ້ນ 5 : 210.000 ກີບ/ຄົນ/ເດືອນ.
- ຜູ້ທີ່ມີຂັ້ນເງິນເດືອນ ຊັ້ນ 6 ຜ່ານມາຈັດເປັນ ພະນັກງານສັນຍາຈ້າງຊັ້ນ 6 : 250.000 ກີບ/ຄົນ/ເດືອນ.

* ອັດຕາຄ່າຈ້າງໃຫ້ພະນັກງານສັນຍາຈ້າງບໍ່ປະຈຳ ( ລາຍວັນ,ເບ້ຍມື້ ) ແມ່ນບໍ່ໄດ້ຈັດເປັນຊັ້ນຄືແຕ່ກ່ອນອີກ, ຈະຄິດໄລ່ໃຫ້ເປັນມື້ ຕ່ຳສຸດບໍ່ໃຫ້ຫລຸດ 4.500 ກີບ/ມື້ ແລະ ສູງສຸດບໍ່ໃຫ້ກາຍ 8.000 ກີບ/ມື້, ແຕ່ສັນຍາເງິນເບ້ຍມື້ບໍ່ໃຫ້ກາຍ 20 ມື້/ເດືອນ.

III: ວິທີຄິດໄລ່ເງິນເດືອນຕາມ ເງິນເດືອນພື້ນຖານໃໝ່:

1. ວິທີຄິດໄລ່ອາກອນເງິນເດືອນ:

ຕາມແຈ້ງການຂອງກະຊວງການເງິນ ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍ ສ່ວຍສາອາກອນສະບັບປັບປຸງເລກທີ 1985/ກງ, ລົງວັນທີ 28 ພະຈິກ 2001

ຕາຕະລາງຄິດໄລ່ອາກອນລາຍໄດ້ຈາກເງິນເດືອນ

| ຂັ້ນ | ຈຳນວນເງິນເດືອນແຕ່ລະເດືອນທີ່ຖືກເສຍອາກອນ | ຈຳນວນເງິນເດືອນທີ່ຖືກເສຍອາກອນແຕ່ລະຂັ້ນ | ອັດຕາອາກອນ | ອາກອນເງິນເດືອນແຕ່ລະຂັ້ນ | ອາກອນລວມແຕ່ຂັ້ນລຸ່ມຫາຂັ້ນເທິງ |
|---|---|---|---|---|---|
| | ແຕ່ 200.000 ກີບລົງມາ | ເງິນຫລຸດຜ່ອນພື້ນຖານ | | | |
| 1 | 200.001 - 700.000 | 500.000 | 5% | 25.000 | 25.000 |
| 2 | 700.001-1.900.000 | 1.200.000 | 10% | 120.000 | 145.000 |
| 3 | 1.900.001-3.700.000 | 1.800.000 | 15% | 170.000 | 415.000 |
| 4 | 3.700.001-5.900.000 | 2.200.000 | 20% | 440.000 | 855.000 |
| 5 | 5.900.001-8.700.000 | 2.800.000 | 25% | 700.000 | 1.555.000 |
| 6 | 8.700.001-11.700.000 | 3.000.000 | 30% | 900.000 | 2.455.000 |
| 7 | 11.700.001-15.000.000 | 3.300.000 | 35% | 1.155.000 | 3.610.000 |
| 8 | 15.000.000ກີບຂຶ້ນໄປ | | 40% | - | - |

2. ວິທີຄິດໄລ່ເງິນຄັງປະກັນສັງຄົມ ແມ່ນຫັກ 6% ຂອງເງິນເດືອນພື້ນຖານຄືເກົ່າ

ຕົວຢ່າງ: ວິທີຄິດໄລ່ເງິນຄັງປະກັນສັງຄົມ

- ຂັ້ນ1, ຂັ້ນ1 ເງິນເດືອນພື້ນຖານຕ່ຳສຸດ 135.000 ກີບ x 6% = 8.100 ກີບ,
- ຂັ້ນ6, ຂັ້ນ2 ເງິນເດືອນພື້ນຖານສູງສຸດ 450.000 ກີບ x 6% = 27.000 ກີບ,

ຕົວຢ່າງ: ວິທີຄິດໄລ່ອາກອນເງິນເດືອນ

- { ( ເງິນເດືອນພື້ນຖານ - ເງິນຄັງປະກັນສັງຄົມ 6% ) + ເງິນອຸດໜູນຕ່າງໆ} x ອັດຕາອາກອນ

{( 450.000 ກີບ - 27.000 ກີບ ) + 150.000 ກີບ } X 5%

IV: ວິທີຈັດຕັ້ງປະຕິບັດ:

ໃຫ້ຈັດຕັ້ງປະຕິບັດເງິນເດືອນພື້ນຖານໃໝ່ ແຕ່ວັນທີ 1/1/2002 ເປັນຕົ້ນໄປ,ໃຫ້ບັນດາກະຊວງ,ອົງການທຽບເທົ່າອ້ອມຂ້າງສູນກາງ ທ້ອງຖິ່ນຕ່າງໆເປັນຜູ້ຄິດໄລ່ ແລະ ກະກຽມງົບປະມານເພື່ອເບີກຈ່າຍເງິນເດືອນ ຕາມເງິນເດືອນພື້ນຖານໃໝ່ ໃຫ້ຄົບຖ້ວນແລະທົ່ວເຖິງ. ສ່ວນທ້ອງຖິ່ນ,ແຂວງໃດກະກຽມບໍ່ທັນກໍ່ໃຫ້ກິນຕາມເກົ່າເສຍກ່ອນ. ຫຼັງຈາກນັ້ນຈຶ່ງ ຄິດໄລ່ເງິນຍ້ອນຫຼັງໃຫ້ພະນັກງານລັດຖະກອນ.

ບັນດາກະຊວງ,ອົງການທຽບເທົ່າອ້ອມຂ້າງສູນກາງ ສົ່ງຂໍ້ມູນຈຳນວນພົນຄັງເງິນເດືອນທີ່ຄິດໄລ່ຕາມເງິນເດືອນໃໝ່ ສົ່ງໃຫ້ກະຊວງການເງິນ ແລະ ບັນດາເມືອງ,ພະແນກການອ້ອມຂ້າງແຂວງ ສົ່ງໃຫ້ພະແນກການເງິນແຂວງສັງລວມ ແລ້ວລາຍງານຄືນໃຫ້ກະຊວງການເງິນບໍ່ໃຫ້ກາຍວັນທີ 30/01/2002.

ໃນພາກປະຕິບັດຕົວຈິງ ຖ້າມີບັນຫາໃດຍັງບໍ່ທັນຈະແຈ້ງໃນການຄິດໄລ່ ແລະການເບີກຈ່າຍຕົວຈິງໃຫ້ລາຍງານຄືນກະຊວງການເງິນ.

ລັດຖະ[illegible]ການກະຊວງການເງິນ

[illegible] ສົມ ປະທາວາ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

# ຕາຕະລາງຄິດໄລ່ເງິນເດືອນພື້ນຖານໃໝ່ ສົກປີ 2001-2002

ເລກທີ 0013/ກງ

| ຂັ້ນ1 | | ຂັ້ນ2 | | ຂັ້ນ3 | | ຂັ້ນ4 | | ຂັ້ນ5 | | ຂັ້ນ6 | |
|---|---|---|---|---|---|---|---|---|---|---|---|
| ດັດສະນີ | ເງິນເດືອນ | ດັດສະນີ | ເງິນເດືອນ | ດັດສະນີ | ເງິນເດືອນ | ດັດສະນີ | ເງິນເດືອນ | ດັດສະນີ | ເງິນເດືອນ | ດັດສະນີ | ເງິນເດືອນ |
| 185 | 185,000 | 213 | 213,000 | 239 | 239,000 | 273 | 273,000 | 325 | 325,000 | | |
| 181 | 181,000 | 207 | 207,000 | 232 | 232,000 | 265 | 265,000 | 315 | 315,000 | | |
| 177 | 177,000 | 201 | 201,000 | 225 | 225,000 | 257 | 257,000 | 305 | 305,000 | | |
| 173 | 173,000 | 195 | 195,000 | 218 | 218,000 | 249 | 249,000 | 295 | 295,000 | | |
| 169 | 169,000 | 189 | 189,000 | 211 | 211,000 | 241 | 241,000 | 285 | 285,000 | | |
| 165 | 165,000 | 183 | 183,000 | 204 | 204,000 | 233 | 233,000 | 275 | 275,000 | | |
| 161 | 161,000 | 177 | 177,000 | 197 | 197,000 | 225 | 225,000 | 265 | 265,000 | | |
| 157 | 157,000 | 171 | 171,000 | 190 | 190,000 | 217 | 217,000 | 255 | 255,000 | | |
| 153 | 153,000 | 165 | 165,000 | 183 | 183,000 | 209 | 209,000 | 245 | 245,000 | | |
| 150 | 150,000 | 161 | 161,000 | 178 | 178,000 | 203 | 203,000 | 238 | 238,000 | | |
| 147 | 147,000 | 157 | 157,000 | 173 | 173,000 | 197 | 197,000 | 231 | 231,000 | | |
| 144 | 144,000 | 153 | 153,000 | 168 | 168,000 | 191 | 191,000 | 224 | 224,000 | | |
| 141 | 141,000 | 149 | 149,000 | 163 | 163,000 | 185 | 185,000 | 217 | 217,000 | | |
| 138 | 138,000 | 145 | 145,000 | 158 | 158,000 | 179 | 179,000 | 210 | 210,000 | 450 | 450,000 |
| 135 | 135,000 | 141 | 141,000 | 153 | 153,000 | 173 | 173,000 | 203 | 203,000 | 400 | 400,000 |

ລັດຖະມົນຕີ ກະຊວງການເງິນ

ສຸກັນ ມະຫາລາດ